ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

.................................

ສຳນັກງານ ຄຄຊ
ຂາເຂົ້າ ເລກທີ 1021
ວັນທີ 11.11.14
ໂທລະສັບ 021 217770

ນາຍົກລັດຖະມົນຕີ

ທະນາຄານແຫ່ງ ສ.ປ.ປ.ລາວ
ຂາເຂົ້າ ເລກ: 6355
ວັນທີ: 24/10/2014
ໂທລະສັບ: 243710

ເລກທີ 106 /ນຍ.

ນະຄອນຫຼວງວຽງຈັນ, ວັນທີ 30.9.2014

# ຂໍ້ຕົກລົງ

## ວ່າດ້ວຍການຮັບຮອງ ແລະ ປະກາດໃຊ້ຜົນການກວດກາ ປະເມີນມາດຕະຖານ ຄວາມທຸກຍາກ ແລະ ການພັດທະນາ ປະຈຳປີ 2014

- ອີງຕາມກົດໝາຍວ່າດ້ວຍລັດຖະບານ ແຫ່ງ ສປປ ລາວ, ສະບັບເລກທີ 02/ສພຊ, ລົງວັນທີ 06 ພຶດສະພາ 2003.
- ອີງຕາມດຳລັດ ສະບັບເລກທີ 309/ນຍ, ລົງວັນທີ 14 ພະຈິກ 2013 ວ່າດ້ວຍມາດຕະຖານຄວາມທຸກຍາກ ແລະ ມາດຕະຖານການພັດທະນາ (2012-2015).
- ອີງຕາມໜັງສືສະເໜີ ສະບັບເລກທີ 575/ຄພທສ, ລົງວັນທີ 19.9.2014 ຂອງຄະນະພັດທະນາຊົນນະບົດ ແລະ ລຶບລ້າງຄວາມທຸກຍາກ ຂັ້ນສູນກາງ.

ດຣ. ທອງພາວ ໄຟສິດ

ນາຍົກລັດຖະມົນຕີ ຕົກລົງ:

ມາດຕາ 1. ຮັບຮອງ ແລະ ປະກາດໃຊ້ ຜົນການກວດກາ ປະເມີນມາດຕະຖານຄວາມທຸກຍາກ ແລະ ມາດຕະຖານການພັດທະນາ ໃນທົ່ວປະເທດ ປະຈຳປີ 2014 ດັ່ງນີ້:

ກ. ໃນທົ່ວປະເທດ ມີຄອບຄົວທັງໝົດ ຈຳນວນ 1.138.287 ຄອບຄົວ, ທຽບໃສ່ປີ 2013 ຈຳນວນຄອບຄົວເພີ່ມຂຶ້ນ 33.395 ຄອບຄົວ.

- ມີຄອບຄົວທຸກຍາກ ຈຳນວນ 92.328 ຄອບຄົວ, ກວມ 8,11%, ທຽບໃສ່ປີ 2013 ຫລຸດລົງ 24.480 ຄອບຄົວ.
- ມີຄອບຄົວພັດທະນາ ຈຳນວນ 808.422 ຄອບຄົວ, ກວມ 71,02%, ທຽບໃສ່ປີ 2013 ເພີ່ມຂຶ້ນ 83.630 ຄອບຄົວ.

ຂ. ໃນທົ່ວປະເທດ ມີບ້ານທັງໝົດ ຈຳນວນ 8.514 ບ້ານ, ທຽບໃສ່ປີ 2013 ຈຳນວນ ບ້ານຫຼຸດລົງ 59 ບ້ານ.

- ມີບ້ານທຸກຍາກ ຈຳນວນ 1.966 ບ້ານ, ກວມ 23,09%, ທຽບໃສ່ປີ2013 ຫຼຸດລົງ 325 ບ້ານ.
- ບ້ານພັດທະນາ ຈຳນວນ 3.095 ບ້ານ, ກວມ 36,35%, ທຽບໃສ່ປີ2013 ເພີ່ມຂຶ້ນ 742 ບ້ານ.
- ບ້ານມີເສັ້ນທາງຄົມມະນາຄົມເຂົ້າເຖິງຫຼວໄດ້ຕະຫຼອດປີ ຈຳນວນ 7.174 ບ້ານ,ກວມ 84,26% ທຽບໃສ່ປີ 2013 ເພີ່ມຂຶ້ນ 231 ບ້ານ.

- ບ້ານທີ່ໄດ້ຮັບການຈັດສັນພູມລໍາເນົາຄົງທີ່ ແລະ ບ່ອນທໍາມາຫາກິນໃຫ້ປະຊາຊົນ ຈໍານວນ 7.390 ບ້ານ,ກວມ 86,80% ທຽບໃສ່ປີ 2013 ເພີ່ມຂຶ້ນ 4 ບ້ານ.
- ບ້ານທີ່ມີຕາຂ່າຍໄຟຟ້າໃນລະບົບ ຈໍານວນ 6.366 ບ້ານ, ກວມ 74,77%, ທຽບໃສ່ປີ 2013 ເພີ່ມຂຶ້ນ 342 ບ້ານ.
- ບ້ານທີ່ມີກຸ່ມຜະລິດ ແລະ ບໍລິການສິນຄ້າ 5.756 ບ້ານ, ກວມ 67,61% ທຽບໃສ່ປີ 2013 ເພີ່ມຂຶ້ນ 436 ບ້ານ.

ຄ. ໃນທົ່ວປະເທດ ມີເມືອງທັງໝົດ ຈໍານວນ 148 ເມືອງ, ທຽບໃສ່ປີ 2013 ເພີ່ມຂຶ້ນ 3 ເມືອງ:

- ມີເມືອງທຸກຍາກ ຈໍານວນ 30 ເມືອງ, ກວມ 20.27% ທຽບໃສ່ປີ 2013 ຫລຸດລົງ 7 ເມືອງ.
- ມີ 4 ຈຸດສຸມ ໄດ້ຮັບການຮັບຮອງເອົາເປັນບ້ານໃຫຍ່ກາຍເປັນຕົວເມືອງນ້ອຍໃນຊົນນະບົດ.

ມາດຕາ 2. ໃຫ້ນໍາໃຊ້ ຜົນຂອງການກວດກາ ປະເມີນນີ້ ເຂົ້າໃນການກໍານົດຄາດໝາຍ, ເປົ້າໝາຍແກ້ໄຂຄວາມທຸກຍາກ ຂັ້ນຄອບຄົວ, ຂັ້ນບ້ານ ແລະ ກໍານົດເປົ້າໝາຍ ສ້າງບ້ານພັດທະນາ ແລະ ສ້າງບ້ານໃຫຍ່ໃຫ້ກາຍເປັນຕົວເມືອງນ້ອຍໃນຊົນນະບົດ ຕາມ 4 ເນື້ອໃນ 4 ຄາດໝາຍ.

ມາດຕາ 3. ມອບໃຫ້ ຄະນະພັດທະນາຊົນນະບົດ ແລະ ລຶບລ້າງຄວາມທຸກຍາກ ຂັ້ນສູນກາງ ເປັນໃຈກາງປະສານສົມທົບກັບກະຊວງ, ອົງການທຽບເທົ່າ ແລະ ອົງການປົກຄອງທ້ອງຖິ່ນ ເພື່ອເຜີຍແຜ່ຜົນການກວດກາປະເມີນດັ່ງກ່າວ ແລະ ຜັນຂະຫຍາຍສ້າງເປັນແຜນການ, ໂຄງການລະອຽດເພື່ອຈັດສັນງົບປະມານ ແລະ ລະດົມທຶນຈາກບັນດາຂະແໜງການ, ທ້ອງຖິ່ນ ແລະ ພາກສ່ວນໃນສັງຄົມຕ່າງໆ ທັງພາຍໃນ ແລະ ຕ່າງປະເທດ ເຂົ້າໃນວຽກງານຮາກຖານການເມືອງ, ພັດທະນາຊົນນະບົດ ແລະ ລຶບລ້າງຄວາມທຸກຍາກ ໃນທົ່ວປະເທດ ໃຫ້ໄດ້ຮັບຜົນດີ.

ມາດຕາ 4. ບັນດາທ່ານລັດຖະມົນຕີວ່າການກະຊວງ, ຫົວໜ້າອົງການທຽບເທົ່າ, ເຈົ້າຄອງນະຄອນຫຼວງ, ເຈົ້າແຂວງ ແລະ ພາກສ່ວນກ່ຽວຂ້ອງຈົ່ງຮັບຮູ້ ແລະ ພ້ອມກັນຈັດຕັ້ງປະຕິບັດຕາມຂໍ້ຕົກລົງສະບັບນີ້ ໃຫ້ໄດ້ຮັບຜົນດີ.

ມາດຕາ 5. ຂໍ້ຕົກລົງສະບັບນີ້ ມີຜົນບັງຄັບໃຊ້ ນັບແຕ່ມື້ລົງລາຍເຊັນ ເປັນຕົ້ນໄປ.

ນາຍົກລັດຖະມົນຕີ

ທອງສິງ ທໍາມະວົງ

<u>ບ່ອນນໍາສົ່ງ:</u>

| | |
|---|---|
| - ສະມາຊິກລັດຖະບານ | 30 ສະບັບ |
| - ຫ້ອງວ່າການສູນກາງພັກ | 01 ສະບັບ |
| - ຫ້ອງວ່າການສະພາແຫ່ງຊາດ | 01 ສະບັບ |
| - ແຂວງ, ນະຄອນຫຼວງວຽງຈັນ | 18 ສະບັບ |
| - ສູນກາງແນວລາວສ້າງຊາດ, ອົງການຈັດຕັ້ງມະຫາຊົນ ຂັ້ນສູນກາງ | 04 ສະບັບ |
| - ສໍານັກງານຢູ່ພາຍໃນ ຫລບ | 08 ສະບັບ |
| - ເກັບມ້ຽນ | 06 ສະບັບ |